NSW GOVERNMENT | Education

ການຕໍ່ຕ້ານການພານຂົ່ມເຫງ

# ຄໍາແນະນໍາສໍາລັບພໍ່ແມ່ ແລະ ຜູ້ດູແລ

ເຈັ້ຍຂໍ້ມູນ

## ການພານຂົ່ມເຫງແມ່ນຫຍັງ?

**ການພານຂົ່ມເຫງມີລັກສນະສາມຢ່າງ ຄື:**

- ພົວພັນກັບການໃຊ້ອໍານາດໃນທາງຜິດຢູ່ໃນຄວາມສໍາພັນ
- ເປັນການກະທໍາທີ່ຕໍ່ເນື່ອງແລະຊໍ້າແບບເກົ່າ ແລະ
- ພົວພັນກັບການປະພຶດທີ່ສາມາດກໍ່ໃຫ້ເກີດອັນຕະລາຍ

**ການພານຂົ່ມເຫງ**ຍັງສາມາດເກີດຂຶ້ນຕາມທາງອອນລາຍ. ອັນນີ້ເປັນທີ່ຮູ້ກັນວ່າໄຊເບີບູລີງ (cyberbullying) ຊຶ່ງໃຊ້ເທັກໂນໂລຢີເຊັ່ນ ອິນເຕີເນັດ ຫຼື ອຸປະກອນເຄື່ອນທີ່ເພື່ອພານຂົ່ມເຫັງຜູ້ໃດຜູ້ນຶ່ງ. ມັນອາດກວມເອົາການສົ່ງຂໍ້ຄວາມ ຫຼື ອີເມລແບບດູຖູກຢຽດຫຍາມ, ສົ່ງຂໍ້ຄວາມທີ່ເຮັດໃຫ້ເຈັບໃຈ ແລະ ໃສ່ຄວາມຄິດເຫັນທີ່ບໍ່ເໝາະສົມຢູ່ໃນຮູບຂອງຄົນອື່ນ.

**ການພານຂົ່ມເຫັງ**ບໍ່ວ່າຈະເປັນຮູບແບບໃດກໍເປັນທີ່ຮັບບໍ່ໄດ້ພາຍໃນໂຮງຮຽນຂອງຣັດ NSW ບໍ່ວ່າຈະດ້ວຍເຫດຜົນໃດກໍຕາມ. ໂຮງຮຽນທັງຫຼາຍມີຄວາມຕັ້ງໃຈຢ່າງແນ່ວແນ່ໃນການເຮັດວຽກກັບບັນດາພໍ່ແມ່, ພະນັກງານ ແລະ ນັກຮຽນເພື່ອຫຼີກເວັ້ນການພານຂົ່ມເຫງ ແລະ ເພື່ອຕອບຮັບຢ່າງໄວແລະມີປະສິດທິພາບຖ້າວ່າມີເລື້ອງນີ້ເກີດຂຶ້ນ.

## ທ່ານສາມາດເຮັດຫຍັງໄດ້ຖ້າລູກທ່ານໄດ້ ຖືກພານຂົ່ມເຫງ?

**ຟັງດ້ວຍຄວາມສງົບແລະເກັບກໍາເອົາເລື້ອງໃຫ້ໝົດ.**

ລູກທ່ານຕ້ອງການຮູ້ວ່າທ່ານຮັບຟັງພວກເຂົາ. ຄວາມຮູ້ສຶກຂອງພວກເຂົາເປັນເລື້ອງສໍາຄັນ ແລະ ຄວາມກັງວົນຂອງພວກເຂົາກໍຄວນຖືວ່າເປັນເລື້ອງຈິງຈັງ. ຈົ່ງສົ່ງເສີມໃຫ້ລູກທ່ານສົນທະນາວ່າມີຫຍັງເກີດຂຶ້ນ. ອະທິບາຍໃຫ້ລູກທ່ານຟັງວ່າການລາຍງານເລື້ອງການພານຂົ່ມເຫງ ແມ່ນເຮັດໄດ້.

ຫຼັງຈາກທີ່ໄດ້ຮັບຟັງຄວາມກັງວົນຂອງພວກເຂົາແລ້ວ, ຈົ່ງຖາມຄໍາຖາມເພື່ອເອົາລາຍລະອຽດເພີ້ມຖ້າຕ້ອງການ: ໃຜ, ແມ່ນຫຍັງ, ຢູ່ໃສ, ເວລາໃດ.

**ຈົ່ງເຮັດໃຫ້ລູກທ່ານແນ່ໃຈວ່າພວກເຂົາຈະບໍ່ຖືກຕິຕຽນ**

ພວກເດັກນ້ອຍອາດຈະຕິຕຽນໂຕເອງ ແລະອັນນີ້ອາດຈະເຮັດໃຫ້ພວກເຂົາຮູ້ສຶກ ບໍ່ດີຫຼາຍຂຶ້ນ. ຈົ່ງເວົ້າສິ່ງທີ່ຊ່ວຍອູ້ມຊູ ເຊັ່ນ, ຟັງເບິ່ງ ກໍແມ່ນເລື້ອງຍາກບໍ່ແມ່ນຂອງຄ່ອຍສໍາລັບເຈົ້າໃດ່ນີ້ ຫຼື ຂ້ອຍດີໃຈຫຼາຍທີ່ເຈົ້າບອກຂ້ອຍ.   ເຈົ້າຄວນຮູ້ສຶກປອດໄພຢູ່ໃນໂຮງຮຽນ.

**ຖາມລູກທ່ານວ່າພວກເຂົາຢາກເຮັດແນວ ໃດ - ແລະ ພວກເຂົາຢາກໃຫ້ທ່ານເຮັດ ແນວໃດ**

ມັນເປັນສິ່ງສໍາຄັນໃນການຊ່ວຍລູກທ່ານ ໃຫ້ ຊອກຫາທາງແກ້ໄຂດ້ວຍວິທີການຂອງພວກເຂົາເອງເພາະອັນນີ້ຈະຊ່ວຍໃຫ້ພວກເຂົາຮູ້ ສຶກວ່າພວກເຂົາມີການຄວບຄຸມສະຖານະການໄດ້ເປັນບາງສ່ວນ.

ຖ້າລູກທ່ານບໍ່ໄດ້ຕົກຢູ່ໃນອັນຕຣາຍໃນດຽວນັ້ນ ແລະ ພວກເຂົາຮຸ້ສຶກໝັ້ນໃຈ, ພວກ ເຂົາສາມາດທົດລອງວິທີເຫຼົ່ານີ້ເບິ່ງ:

- ເພີກເສີຍຕໍ່ການພານຂົ່ມເຫັງ
- ຫັນຫຼັງໃສ່ແລ້ວຍ່າງໜີໄປ
- ທໍາທ່າຄືບໍ່ອອນຊອນຫຼືທໍາທ່າວ່າພວກເຂົາບໍ່ສົນໃຈ
- ເວົ້າ “ບໍ່” ຫຼື “ຢຸດດຽວນີ້!” ຢ່າງເຂັ້ມແຂງ

ຖ້າມີການພານຂົ່ມເຫັງເກີດຂຶ້ນຢູ່ໂຮງຮຽນ, ຈົ່ງສນັບສນຸນລູກທ່ານໃຫ້ບອກຕໍ່ນາຍຄູ. ຖ້າລູກທ່ານຕ້ອງການໂອ້ລົມກັບໃຜຜູ້ນຶ່ງນອກຈາກໂຮງຮຽນຫຼືທ່ານຄິດວ່າການຊ່ວຍເຫຼືອຕື່ມຈະຊ່ວຍໄດ້, ທ່ານສາມາດບອກພວກເຂົາເປີດເຂົ້າເບິ່ງເວັບໄຊຕ໌ຂອງສາຍຊ່ວຍເຫຼືອເດັກ (Kids Helpline). ນອກຈາກນີ້ພວກເຂົາສາມາດໂທຣະສັບຫາໄດ້ໂດຍບໍ່ເສັຍຄ່າໂທຕາມໝາຍເລກ 1800 55 1800.

**ຂ້ອຍຈະຕິດຕໍ່ທາງໂຮງຮຽນຕອນໃດ?**

ລູກທ່ານອາດຈະລັງເລໃຈທີ່ຈະໃຫ້ທ່ານໂອ້ລົມກັບພະນັກງານຢູ່ໂຮງຮຽນ. ໃຫ້ປຶກສາຄວາມຄິດນີ້ກັບພວກເຂົາ ແລະ ເຮັດໃຫ້ພວກເຂົາແນ່ໃຈວ່າທາງໂຮງຮຽນຕ້ອງການ ຢາກຮູ້ ແລະ ສາມາດຊ່ວຍໄດ້.

ຖ້າຕ້ອງການ ຈົ່ງເຮັດນັດໝາຍໄປພົບນາຍຄູຂອງລູກທ່ານ. ທ່ານຍັງສາມາດຂໍໂອ້ລົມກັບທ່ານຄູໃຫຍ່ໄດ້.

ຈົ່ງຕິດຕໍ່ໂຮງຮຽນໃນທັນທີຖ້າທ່ານມີຄວາມກັງວົນກ່ຽວກັບຄວາມປອດໄພຂອງລູກທ່ານ.

**ການອູ້ມຊູສໍາລັບພໍ່ແມ່ ແລະ ຜູ້ດູແລ**

Kids Helpline ຍັງມີສາຍສໍາລັບພໍ່ແມ່ຊຶ່ງມີທີມທີ່ຜ່ານການຝຶກຫັດມາແລ້ວທີ່ສາມາດໃຫ້ການຊ່ວຍເຫຼືອ, ຂໍ້ມູນ ແລະ ຄໍາ ປຶກສາຫາລືສໍາລັບພໍ່ແມ່ທີ່ມີລູກອາຍຸລະ ຫວ່າງ 0-18 ປີ. ທ່ານສາມາດໂທຣະສັບ ຫາພວກເຂົາໄດ້ດ້ວຍຄ່າໂທທ້ອງຖິ່ນ ຈາກ ເວລາ 9ໂມງເຊົ້າ ຫາ 9ໂມງແລງ ວັນຈັນ ຫາວັນສຸກ ແລະ 4ໂມງແລງ ຫາ 9ໂມງແລງໃນວັນສຸດສັປດາ ຕາມໝາຍເລກ 1300 1300 52.

**ບໍຣິການນາຍພາສາທາງໂທຣະສັບ**

ຖ້າທ່ານຕ້ອງການຕິດຕໍ່ຫາທາງໂຮງຮຽນ ຫຼື ໂທຣະສັບສາຍສໍາລັບພໍ່ແມ່ ຣັດ NSW (Parent Line NSW) ແລະຕ້ອງການຄວາມຊ່ວຍເຫຼືອດ້ານພາສາອັງກິດ ກະຣຸນາໂທຫາບໍຣິການ ນາຍພາສາທາງໂທ ຣະສັບ ຕາມໝາຍເລກ 131 450, ໃຫ້ບອກພວກເຂົາວ່າທ່ານຕ້ອງການພາສາໃດ ແລະ ຂໍໃຫ້ຜູ້ຮັບສາຍໂທໄປຫາໂຮງຮຽນໃຫ້. ຜູ້ຮັບສາຍຈະຊອກເອົານາຍພາສາມາເວົ້າສາຍເພື່ອຊ່ວຍທ່ານໃນການສົນທະນາ.  ທ່ານບໍ່ຕ້ອງເສັຍຄ່າບໍຣິການນີ້.